## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 18 ມີນາ 2007 (03-18-2007)

---

# ພຣະເຢຊູຊົງເຮັດຫຍັງແດ່ເພື່ອເຮົາ?

**ຂໍ້ພຣະຄັມພີໃນບົດຮຽນ:** ( ໂຢຮັນ 10:1-5,7-15,17-18 )

**ພຣະຄັມພີແຫ່ງຄວາມຈິງ:** ໃນຖານະຜູ້ລ້ຽງທີ່ດີ, ພຣະເຢຊູຊົງຮູ້ວ່າ, ສິ່ງໃດເຫມາະສົມ, ແລະພຣະອົງຈະປົກປ້ອງແກະຂອງພຣະອົງ. ຊົງຍອມສິ້ນພຣະຊົນເພື່ອພວກເຂົານຳ.

**ຜົນສະທ້ອນຕໍ່ຊີວິດ:** ໃນບົດຮຽນນີ້ຈະຊ່ວຍໃຫ້ທ່ານໄດ້ຄົ້ນພົບວ່າພຣະເຢຊູໄດ້ຊົງເຮັດສິ່ງໃດເພື່ອພວກເຮົາໂດຍ:

* ເຂົ້າໃຈດ້ວຍຕົວຂອງທ່ານເອງແລ້ວວ່າທ່ານບໍ່ມີຫົນທາງທີ່ຈະຊ່ວຍແລະປ້ອງກັນຕົວເອງຈາກຄວາມຊົ່ວຮ້າຍແລະອັນຕະລາຍທີ່ເກີດຂຶ້ນຢູ່ໃນໂລກນີ້; ແລະ
* ຍອມຮັບທີ່ຈະມີຊີວິດທີ່ຈະຮັບເອົາຜູ້ລ້ຽງທີ່ດີທີ່ໄດ້ຈັດຕຽມສິ່ງທີ່ທ່ານຕ້ອງການໃຫ້ແລະປົກປ້ອງທ່ານໄດ້.

## ສຶກສາພຣະຄັມພີ

### ໃຜຈະດູແລເບິ່ງແຍງຂ້າພະເຈົ້າ

ເຈຊັນແລະທອດ ໄດ້ສູນເສັຽພໍ່ໄປໃນຂນະທີ່ເພິ່ນຍັງຕິດຢູ່ໃນຄຸກແລະໄດ້ເສັຽແມ່ໄປຍ້ອນໂຣກຫົວໃຈວາຍຕັ້ງແຕ່ພວກເຂົາອາຍຸບໍ່ທັນໄດ້ມີສິດເລືອກຕັ້ງເທື່ອ. ພວກເຂົາໄດ້ສູ້ທົນຕໍ່ຊີວິດທີ່ຕ້ອງໄດ້ຕັດສິນໃຈໃນສິ່ງທີ່ຍາກທີ່ສຸດ. ຫລັງຈາກທີ່ພໍ່ຂອງພວກເຂົາຖືກຕິດຄຸກ, ທັງສອງຫນຸ່ມນ້ອຍກໍເລີ້ມໃຊ້ຊີວິດໄປໃນທາງທີ່ຜິດ. ແມ່ກໍໄດ້ພະຍາຍາມແນະນຳເຂົາໃຫ້ດຳເນີນຊີວິດໃນທາງທີ່ຖືກຕ້ອງແຕ່ບໍ່ໄດ້ຜົນ. ຫລັງຈາກນັ້ນບໍ່ດົນພວກເຂົາທັງສອງກໍໄດ້ໄປຮ່ວມໃນກິຈກັມຂອງຄົນຫນຸ່ມໂບດນຶ່ງທີ່ຢູ່ໃນເຂດນັ້ນ, ພວກເຂົາກໍຮັບເອົາພຣະຄຣິດ, ແລະທອດກໍໄດ້ຮັບສົມບັບຕິສມາແລະເປັນອາທິດສຸດທ້າຍຊີວິດແມ່ຂອງພວກເຂົາ, ເພາະໃນອາທິດຕໍ່ມາແມ່ກໍຕາຍດ້ວຍໂຣກຫົວໃຈວາຍແລະປະສອງອ້າຍນ້ອງໄວ້ໃຫ້ປະເຊີນກັບຊີວິດໂດຍບໍ່ຮູ້ທິດທາງ.

ເຈຊັນແລະທອດ, ກໍປະເຊີນກັບມໍລະສຸມຊີວິດໃນວັນນີ້ເຫມືອນກັນກັບຄົນອື່ນໆ , ໂດຍພົບກັບຄວາມສົງໃສໃນພວກເຂົາເອງວ່າຄົງມີແຕ່ພວກເຂົາພຽງລຳພັງໃນໂລກນີ້ທີ່ຕ້ອງພໍ້ກັບບັນຫາຫຍຸ້ງຍາກໃຈທາງດ້ານການເງິນ, ແລະຄວາມຢ້ານກົວຕໍ່ພັຍອັນຕະລາຍຂອງສັງຄົມທີ່ມີຢູ່ໃນປັດຈຸບັນ. ເຂົາພຽງຢາກຈະຮູ້ວ່າ, "ແມ່ນໃຜຈະດູແລເບິ່ງແຍງຂ້ອຍ? ". ພວກເຂົາບໍ່ໄດ້ຢູ່ຕາມລຳພັງດອກ, ເພາະວ່າພຣະເຈົ້າໄດ້ຊົງຈັດຕຽມຄົນຂອງພຣະອົງຄືພວກພີ່ນ້ອງທີ່ເປັນສະມາຊິກຂອງໂບດທີ່ເຂົາໄປຮ່ວມກິຈກັມນຳຄົນຫນຸ່ມນັ້ນ, ຄືພຣະອົງໄດ້ໃຊ້ຕີນແລະມືຂອງພວກເພິ່ນໃຫ້ເປັນທໍ່ພຣະພອນໃນການນຳຂ່າວປະເສີດໄປຫາພວກເຂົາທັງສອງ.

### 1. ພຣະອົງຊົງນຳພາຂ້າພະເຈົ້າ ໂຢຮັນ 10 :1-5 )

ຫລັງຈາກຕິດຕາມບົດຮຽນໃນອາທິດທີ່ຜ່ານມາກ່ຽວກັບຊາຍຕາບອດຜູ້ນຶ່ງທີ່ຖືກສອບຖາມຈາກພວກຕາບອດຝ່າຍຈິດວິນຍານກໍຄືພວກຟາຣີຊາຍ, ພຣະເຢຊູໄດ້ໃຫ້ຂໍ້ປຽບທຽບລະຫວ່າງພວກຜູ້ນຳເຫລົ່ານັ້ນກັບອີກຜູ້ນຶ່ງທີ່ມີຫົວໃຈພິເສດຂອງການເປັນຜູ້ລ້ຽງທີ່ດີແລະພ້ອມສເມີທີ່ຈະເສັຽສລະເພື່ອປົດປ່ອຍແກະຂອງຕົນ. ພຣະອົງຊົງອະທິບາຍໃຫ້ຮູ້ແຈ້ງເຖິງຄວາມຮູ້ສຶກຂອງແກະທີ່ມັນສາມາດຮູ້ດ້ວຍສັນຊາດຍານຂອງມັນເອງວ່າ ໃຜເປັນຜູ້ລ້ຽງທີ່ດີແລະໃຜຈະເປັນຜູ້ມາທຳຮ້າຍພວກມັນ. ພຣະເຢຊູຊົງບອກເຖິງຄຸນລັກສນະຜູ້ລ້ຽງທີ່ດີມີຢູ່ສອງຢ່າງ.

ນີ້ງ, ຜູ້ລ້ຽງທີ່ດີຈະຮູ້ຈັກແກະຂອງຕົນແຕ່ລະໂຕ**ດ້ວຍຊື່ຂອງມັນ**, ໝາຍຄວາມວ່າເຂົາມີຄວາມໝາຍສະເພາະໂຕ ແລະມີຄວາມສຳຄັນເທົ່າກັນໝົດທຸກໂຕຊຶ່ງໝາຍເຖິງມະນຸດທຸກຄົນ ພຣະເຈົ້າຊົງຮູ້ຈັກທັມມະຊາດຂອງແຕ່ລະຄົນຄື ຄວາມຕ້ອງການຄວາມປອດພັຍແລະທິດທາງວ່າໄປທາງໃດແລະຊົງຮູ້ວ່າຜູ້ໃດເປັນຂອງພຣະອົງ.

ຕໍ່ມາກໍຄືພຣະເຢຊູຊົງບອກວ່າພຣະອົງນັ້ນແຫລະເປັນຜູ້ລ້ຽງທີ່ດີຄື**ເປັນຜູ້ນຳອອກໄປ**ໃນທາງທີ່ດີ. ການບັນທຶກໃນພຣະຄັມພີເຖິງຜູ້ລ້ຽງທີ່ດີແມ່ນຜູ້ທີ່ນຳແກະໄປໃນທົ່ງຫຍ້າທີ່ຂຽວສົດແລະມີນ້ຳກິນທີ່ສະອາດ. ປົກປ້ອງຮັກສາເຂົາໃຫ້ປອດພັຍຈາກສັດຮ້າຍທີ່ເປັນອັນຕະລາຍຕໍ່ຊີວິດຂອງພວກມັນ , ເບິ່ງແຍງຄວາມປອດພັຍ, ທັງນັບເບິ່ງໃຫ້ຄົບໝົດທຸກໂຕຕາມຊື່ຂອງມັນແລະນຳໄປໃນທິດທາງທີ່ຖືກຕ້ອງ.

ພວກທ່ານເຄີຍມີຄວາມຢ້ານກົວທີ່ຈະກ້າວຕໍ່ໄປໃນໂລກນີ້ບໍ່? ທ່ານມີຄວາມຫວັ່ນໄຫວທີ່ອາດຈະຖືກຍົກຍ້າຍອອກຈາກບ່ອນທີ່ທ່ານຄຸ້ນເຄີຍແລະອົບອຸ່ນແມ່ນບໍ່? ຂອບພຣະຄຸນພຣະເຈົ້າ, ທ່ານບໍ່ໄດ້ຖືກຍົກຍ້າຍອອກໄປພຽງລຳພັງແຕ່ທ່ານມີຜູ້ລ້ຽງທີ່ດີທີ່ຍ່າງໄປຄຽງຄູ່ກັບທ່ານ ຄືເປັນຜູ້ທີ່ຮູ້ຈັກທ່ານດ້ວຍຊື່ຂອງແຕ່ລະຄົນແລະມີຄວາມຮັກທີ່ມາຈາກຈິດໃຈທີ່ແທ້ຈິງ.

ຄວາມຮັບຜິດຊອບຂອງແກະກໍໄດ້ຍິນສຽງຂອງຜູ້ລ້ຽງແທ້ແລະຕິດຕາມເພິ່ນໄປ. ບາງຄົນອາດຈະໄດ້ຍິນສຽງຜິດແລະຕິດຕາມຄົນແປກໜ້າໄປ, ແລະເຂົາກໍຜິດຫວັງຍ້ອນບໍ່ໄດ້ສິ່ງທີ່ດີແລະຄວາມອົບອຸ່ນທີ່ເຂົາສົມຄວນຈະໄດ້ຮັບຈາກຜູ້ລ້ຽງແທ້ຄືພຣະເຢຊູຈະເປັນຜູ້ປະທານໃຫ້ ( ຂໍ້ 11 ).

ໃນເວລາທີ່ປະເຊີນໜ້າກັບຄວາມອ້າງວ້າງ, ໂດດດ່ຽວ, ແລະບໍ່ມີຄວາມໝາຍນັ້ນ, ພຣະເຢຊູຈະຊົງເປັນຜູ້ລ້ຽງແລະຈະນຳທ່ານໃຫ້ເດີນໄປໃນທາງທີ່ຖືກຕ້ອງຕາມຈຸດປະສົງໃນຊີວິດຂອງແຕ່ລະຄົນ. ບໍ່ຄືກັບພວກຟາຣີຊາຍບໍ່ໄດ້ມີຄວາມຫ່ວງໃຍຕໍ່ຜູ້ທີ່ຕິດຕາມພວກເຂົາເລີຍ, ແຕ່ພຣະເຢຊູຊົງຮັກຜູ້ທີ່ຕິດຕາມພຣະອົງ. ພວກຟາຣີຊາຍບໍ່ຕ້ອງການໃຫ້ຊີວິດຂອງຜູ້ຕິດຕາມເຂົານັ້ນມີຊີວິດທີ່ດີສົມບູນຂຶ້ນຫລືຖືກໄຖ່ໄວ້ໃນມືຂອງພຣະອົງ. ພຣະເຢຊູຊົງເປັນຜູ້ຢັ່ງຮູ້ເຖິງຄວາມຕ້ອງການພື້ນຖານຂອງພວກເຂົາແຕ່ລະຄົນຄືສິ່ງທີ່ຈະລ້ຽງພວກເຂົາໃຫ້ໃຫຍ່ເຕັມບໍຣິບູນ, ອີກທັງການປົກປ້ອງຄຸ້ມຄອງແລະການຊົງນຳພາທີ່ຈະຊອກຫາຈາກທີ່ໃດນອກຈາກຜູ້ລ້ຽງຂອງພວກເຮົາຜູ້ນີ້ແມ່ນບໍ່?

## ໒. <u>ພຣະອົງຊົງປະທານຊີວິດ</u> (ໂຢຮັນ 10:7-15 )

ປະຕູທາງເຂົ້າແມ່ນບ່ອນທີ່ປອດພັຍທີ່ຈະນຳໄປສູ່ສະຖານທີ່ອຸດົມສົມບູນໄປດ້ວຍອາຫານທີ່ຝູງແກະຕ້ອງການ. ທີ່ທາງອອກຂອງປະຕູ, ຜູ້ລ້ຽງແກະຈະນັບແລະກວດເບິ່ງສຸຂພາບຂອງແຕ່ລະໂຕວ່າປອດພັຍດີບໍ່, ເຊັ່ນອາດຈະມີແມງບາງຢ່າງກັດຫລືຕອດທີ່ອາດຈະເຮັດໃຫ້ແກະເຈັບປ່ວຍ ແລະຈະທຳຄວາມສະອາດໃຫ້ພວກເຂົາກ່ອນທີ່ຈະເຂົ້າຄອກ. ພວກແກະອາດຈະຮູ້ພຽງຢ່າງດຽວຄືເຂົ້າຄອກ, ແລະໂດຍຜ່ານ**ທາງຂອງແກະ**ຫລືປະຕູ. ພຣະເຢຊູໄດ້ປະກາດວ່າພຣະອົງເປັນປະຕູຂອງແກະທັງຫລາຍແລະເປັນທາງດຽວທີ່ຈະເຂົ້າໄປໃນຄອກໄດ້ກໍຄືຜ່ານທາງພຣະອົງກ່ອນ.

ຜູ້ທີ່ມາກ່ອນນັ້ນກໍ**ເປັນຂະໂມຍແລະໂຈນ**ໝາຍເຖິງການສະແດງອອກຂອງພວກຟາຣີຊາຍໃນເຣື່ອງຊາຍຕາບອດທີ່ໄດ້ຮັບການປິ່ນປົວຈາກພຣະເຢຊູ, ແຕ່ພວກຟາຣີຊາຍຫາວິທີທາງທີ່ຈະໃຫ້ລາວຕໍ່ສູ້ກັບພຣະຄຣິດ. ດ້ວຍຄວາມເຫັນແກ່ໂຕເພື່ອອ້າງວ່າເຮັດເພື່ອໃຫ້ຖືກນ້ຳພຣະທັຍພຣະເຈົ້າໂດຍທັມມະຊາດຕາມຕັນຫາຂອງມະນຸດກໍຄືຜົນທີ່ໄດ້ພຽງແຕ່ຈະລັກ, ຂ້າ ແລະທຳລາຍ. ພວກເຂົາບໍ່ສົນໃຈຊາຍທີ່ເຄີຍຕາບອດ, ແຕ່ພວກເຂົາຕ້ອງການທີ່ຈະຫາຊື່ສຽງໃຫ້ກັບໂຕເອງ.

ຄວາມແຕກຕ່າງຈາກພວກຟາຣີຊາຍ, ພຣະເຢຊູຈະຊົງປະທານຄວາມ**ສົມບູນ**ຂອງ**ຊີວິດ**. ພຣະອົງຊົງສັນຍາທີ່ຈະປະທານຊີວິດນິຣັນດອນ, ການປິ່ນປົວ, ຄວາມອົບອຸ່ນແລະຊົງນຳພາ. ແຕ່ຄົນເຮົາໃນທຸກວັນນີ້ຜັດຄົ້ນຫາແຕ່ວັດຖຸສິ່ງຂອງທີ່ຈະມາບຳລຸງຊີວິດເພື່ອໃຫ້ຄວາມຕ້ອງການແລະຄວາມຫວັງພຽງແຕ່ເວລາທີ່ຢູ່ໂລກນີ້ເທົ່ານັ້ນ. ຈົນກວ່າພວກເຂົາຈະພົບກັບພຣະຄຣິດ, ພວກເຂົາກໍຈະຍັງຊອກຫາຢູ່. ພຣະອົງເທົ່ານັ້ນທີ່ເປັນ**ປະຕູ**ຂອງຊີວິດອັນສົມບູນແລະຕລອດໄປເປັນນິດ.

ພຣະເຢຊູຊົງໃຫ້ສັນຍາວ່າຜູ້ໃດທີ່ເຂົ້າປະຕູທາງພຣະອົງຈະ**ປອດພັຍ**. ອາດຈະຖາມວ່າປອດພັຍຈາກຫຍັງ? ຄວາມໝາຍທີ່ແທ້ຈິງກໍຄືພົ້ນຈາກຄວາມບາບຂອງເຮົານັ້ນເອງ. ຄວາມບາບເຮັດໃຫ້ພວກເຮົາຫ່າງຈາກພຣະຣັສມີຂອງພຣະ

ເຈົ້າແລະເປັນສິ່ງທີ່ຈະທຳລາຍພວກເຮົາ. ເຖິງປານນັ້ນ, ພຣະເຢຊູກໍຍັງຊ່ວຍຜູ້ທີ່ມີຊີວິດຢູ່ຢ່າງໄຮ້ຄວາມໝາຍ, ໄດ້ພົບກັບສິ່ງທີ່ດີ ໆ ດ້ວຍຕົນເອງແລະຈະບໍ່ມີຄວາມສົງສັຍໃນສິ່ງໃດທີ່ພວກເຮົາໄດ້ກະທຳໄປ. ຄວາມລອດພົ້ນຄືພົ້ນຈາກຄວາມບາບ, ແຕ່ສິ່ງທີ່ໄດ້ຫລາຍກວ່ານັ້ນກໍຄືພຣະເຢຊູຈະຊົງເພີ້ມເຕີມຊີວິດທີ່ສົມບູນໃນອານາຄົດກໍຄືຊີວິດໃນສວັນ.

## 3. <u>ພຣະອົງຊົງສລະຊີວິດຂອງພຣະອົງເພື່ອຂ້າພະເຈົ້າ</u> ( ໂຢຮັນ 10:11-15,17-18 )

ຈົນເຖິງຈຸດນີ້, ພຣະເຢຊູໄດ້ເວົ້າເຖິງຄວາມແຕກຕ່າງລະຫວ່າງຜູ້ລ້ຽງທີ່ດີແລະຜູ້ລ້ຽງທີ່ບໍ່ໄດ້ສົນໃຈຫ່ວງໃຍແກະຂອງຕົນເລີຍ. ຄົນທີ່ໄດ້ຟັງແຕ່ພວກເຂົາບໍ່ເຂົ້າໃຈໃນເລື່ອງນີ້ ( ຂໍ້ 6 ) ດັ່ງນັ້ນພຣະອົງຈຶ່ງຊົງກ່າວເປີດເຜີຍວ່າ **ເຮົາເປັນຜູ້ລ້ຽງທີ່ດີ, ຜູ້ລ້ຽງທີ່ດີນັ້ນຍອມເສັຽສລະຊີວິດຂອງຕົນເພື່ອຝູງແກະ.**

ພຣະເຢຊູໄດ້ປຽບທຽບການສະແດງອອກຂອງຜູ້ຮັບຈ້າງແລະບໍ່ໄດ້ເປັນເຈົ້າຂອງ. ຄືຜູ້ທີ່ຮັບຈ້າງກໍພຽງແຕ່ຢູ່ຊົ່ວຄາວ, ບໍ່ໄດ້ໃຫ້ຄຳໝັ້ນສັນຍາອັນໃດຕໍ່ພວກແກະ, ເຂົາເຮັດວຽກທຸກຢ່າງດ້ວຍໜ້າທີ່ບັງຄັບແລະກໍພຽງເພື່ອເງິນຄ່າຈ້າງເທົ່ານັ້ນ. ຄືປາສຈາກຄວາມຮັກ, ຄວາມຫວັງດີເພາະຝູງແກະບໍ່ແມ່ນຂອງເຂົາເມື່ອຖືກຝູງໝາໃນເຂົ້າມາໂຈມຕີຜູ້ຮັບຈ້າງກໍຈະປ້ອງກັນຕົວເອງ ແຕ່ບໍ່ໄດ້ຫ່ວງພວກແກະເລີຍຊຶ່ງກົງກັນຂ້າມກັບຜູ້ລ້ຽງທີ່ດີແມ່ນຈະຕໍ່ສູ້ກັບໝາໃນເພື່ອປົກປ້ອງຝູງແກະຂອງຕົນຄືຍອມຕາຍເພື່ອໄດ້ດັ່ງທີ່ໄດ້ກ່າວໄວ້ໃນ ( ຂໍ້ 14 ), ພຣະອົງຊົງຮູ້ຈັກພວກເຂົາແລະພວກເຂົາກໍຮູ້ຈັກພຣະອົງຄືກັນເປັນການສະແດງອອກເຖິງພຣະທັຍທີ່ອ່ອນໂຍນຂອງພຣະຄຣິດຕໍ່ຜູ້ທີ່ຕິດຕາມພຣະອົງທຸກຄົນ.

ມື້ວານນີ້, ໃນຂນະທີ່ພວກເຮົາກຳລັງຂຽນບົດຮຽນບົດນີ້ຢູ່, ມີຍິງສາວຜູ້ນຶ່ງຍ່າງເຂົ້າມາໃນຫ້ອງການເພື່ອທີ່ຈະສົນທະນາ. ຂ້າພະເຈົ້າຟັງການເລົ່າເລື່ອງທີ່ນາງໄດ້ຊ່ວຍຫລາຍຄົນທີ່ເຂົາມີບັນຫາຕິດຂັດທາງດ້ານການເງິນ, ນາງມີຄວາມສຳເຣັດໃນວຽກງານທີ່ນາງເຮັດຢູ່ມີຊີວິດການເປັນຢູ່ທີ່ສົມບູນແລະບໍ່ເຄີຍປະຕິເສດໃນການຊ່ວຍເຫລືອຜູ້ທີ່ມາຫານາງ. ໃນເວລານັ້ນດ້ວຍຄວາມສຳເຣັດໃນຊີວິດກັບເຮັດໃຫ້ນາງໄດ້ຫລົງທາງຫ່າງເຫີນຈາກພຣະເຈົ້າ, ຄືເຊົາໄປໂບດ. ລົມພາຍຸກາຕຣິນາໄດ້ພັດທຳລາຍທຸກສິ່ງທຸກຢ່າງທີ່ນາງມີຄວາມພາກພູມໃຈແຕ່ກ່ອນນັ້ນ, ແລະນາງກໍໄດ້ເຂົ້າມາຫ້ອງການນີ້ທີ່ເປັນບ່ອນສຸດທ້າຍທີ່ນາງຈະເພິ່ງໄດ້. ຍ້ອນມີບັນຫາໃນການຂຽນເຊັກທີ່ບໍ່ມີເງິນໃນທະນາຄານກໍເພື່ອທີ່ຈະຮັກສາໜ້າຕາແລະປິດບັງຖານະທີ່ແທ້ຈິງຂອງນາງ ແລະລູກສາວໃນດຳເນີນຊີວິດຕໍ່ສູ້ຫລັງຈາກທີ່ລົມພາຍຸກາຕຣິນາທຳລາຍໄປໝົດແລ້ວ. ນາງເວົ້າວ່າ, " ພວກຄົນທີ່ຂ້ອຍເຄີຍຊ່ວຍເຫລືອແຕ່ກ່ອນນັ້ນພາກັນໜີໄປໃສໝົດແລ້ວ? ເປັນຫຍັງຂ້ອຍຈະຕ້ອງໄດ້ທົນຕໍ່ສູ້ໃນຄວາມລົ້ມເຫລວຂອງຊີວິດໃນຄັ້ງນີ້ພຽງລຳພັງຜູ້ດຽວ?" ພວກເຮົາຕອບວ່ານາງບໍ່ໄດ້ຢູ່ຜູ້ດຽວດອກ, ໂບດຂອງພວກເຮົາມີການຈັດຕັ້ງໃຫ້ມີການຊ່ວຍເຫລືອຜູ້ປະສົບພັຍຈາກພາຍຸທຳລາຍຄັ້ງນີ້ຄືຊ່ວຍນາງບໍ່ໃຫ້ຄິດທຸກໃຈໃນເລື່ອງຄວາມລົ້ມເຫລວໃນຊີວິດຍ້ອນເຫດການທີ່ເກີດຂື້ນນີ້. ແລະບັດນີ້ນາງກໍມີຄວາມຫວັງແລ້ວ-ທີ່ພຣະເຈົ້າຍັງຄົງຮັກນາງຢູ່ ແລະພຣະອົງໄດ້ສົ່ງຄົນຂອງພຣະອົງມາຊ່ວຍໃນຂນະທີ່ບໍ່ມີໃຜສົນໃຈນາງເລີຍ. ແລະນາງກໍຮູ້ສຳນຶກວ່າພຣະເຈົ້າຈະບໍ່ປະຖິ້ມຜູ້ໃດຜູ້ນຶ່ງໂດຍສະເພາະຜູ້ທີ່ຕ້ອງການຈະຕິດຕາມພຣະອົງ.

ການຍອມສິ້ນພຣະຊົນຂອງພຣະເຢຊູບໍ່ເປັນສິ່ງທີ່ອັສຈັນພຽງພໍຫລື, ພຣະຄຳໃນຂໍ້ 17-18 ເປັນຂໍ້ຄວາມທີ່ບອກແຈ້ງຕໍ່ຜູ້ທີ່ໄດ້ຍິນໄດ້ຟັງ. ພຣະອົງຊົງກ່າວວ່າ ພຣະບິດາຊົງຮັກເຮົາເພາະເຮົາສລະຊີວິດຂອງເຮົາແລະຄວາມຈິງແທ້ແລ້ວກໍຄືພຣະອົງຍອມສິ້ນພຣະຊົນດ້ວຍຄວາມສມັກໃຈ, ແລະກໍຈະຮັບຊີວິດນັ້ນຄືນມາອີກ. ຄວາມໝາຍທີ່ແທ້ຈິງກໍຄືພຣະອົງຈະຟື້ນຄືນພຣະຊົນຈາກຄວາມຕາຍບໍ່ຄືການສະແດງໜັງຂອງນັກສະແດງ ທີ່ເປັນຂວັນໃຈຂອງຄົນທີ່ໄດ້ເບິ່ງພາບພະຍົນເລື່ອງໃດເລື່ອງນຶ່ງເທົ່ານັ້ນ. ແຕ່ການສິ້ນພຣະຊົນຂອງພຣະອົງແມ່ນເພື່ອຈຸດປະສົງໃນອະນາຄົດ, ບໍ່ພຽງແຕ່ຍອມທຸກທໍຣະມານເພື່ອຄວາມບາບເທົ່ານັ້ນ ແຕ່ຟື້ນຄືນພຣະຊົນຄືມີຣິດອຳນາດທີ່ຢູ່ເໜືອຄວາມຕາຍອີກດ້ວຍແລະຜູ້ທີ່ຕິດຕາມພຣະອົງກໍມີຊັຍຊະນະຄືກັນ.

ພຣະເຢຊູຊົງຮັກແກະຂອງພຣະອົງແລະຈະບໍ່ປະຖິ້ມພວກເຂົາໃຫ້ຕໍ່ສູ້ກັບພັຍອັນຕະລາຍຕາມລຳພັງ. ຈິດໃຈທີ່ບໍຣິສຸດຂອງຜູ້ລ້ຽງທີ່ດີແມ່ນມີຄວາມຕັ້ງໃຈທີ່ຈະນຳຝູງແກະໃຫ້ເຂົ້າມາຄອກທຸກຕົວດ້ວຍຄວາມປອດພັຍ. ໂດຍຍອມເຊື່ອຟັງຕາມນ້ຳພຣະທັຍຂອງພຣະບິດາ, ພຣະເຢຊູໄດ້ສິ້ນພຣະຊົນແລະຟື້ນຄືນພຣະຊົນຄືນມາອີກກໍເພື່ອຜູ້ທີ່ຕິດຕາມພຣະອົງຈະໄດ້ມີຊີວິດຢູ່ໃຕ້ຮົ່ມພຣະຄຸນຂອງຜູ້ລ້ຽງທີ່ດີ.

## ບົດຮຽນຊີວິດ

**ພຣະເຢຊູຊົງມີຄວາມຫ່ວງໃຍຕໍ່ຜູ້ທີ່ຕິດຕາມພຣະອົງກໍເຫມືອນກັນກັບຜູ້ລ້ຽງ ທີ່ດີທີ່ມີຄວາມຫ່ວງໃຍຕໍ່ແກະຂອງຕົນ**

* ໂດຍເປັນຜູ້ແນະນຳການດຳຣົງຊີວິດແລະການແກ້ໄຂບັນຫາທີ່ເກີດຂື້ນໃນຊີວິດ.
* ໂດຍຊົງປະທານຊີວິດອັນຕລອດໄປເປັນນິດແລະຄວາມສົມບູນຂອງຊີວິດໃຫ້.
* ໂດຍຊົງຍອມສລະຊີວິດເພື່ອລົບລ້າງຄວາມຜິດບາບແລະຄວາມຕາຍທີ່ມີອຳນາດຢູ່ ເຫນືອພວກເຮົາ.

**ແມ່ນຫຍັງທີ່ເປັນຄວາມຈິງທີ່ຈະນຳມາໃຊ້ໃນຊີວິດປະຈຳວັນຂອງພວກເຮົາ? ພວກ ເຮົາສາມາດ...**

* ມີຄວາມເຂົ້າໃຈເຖິງເຣື່ອງທີ່ພຣະເຢຊູຊົງຫ່ວງໃຍພວກເຮົາແຕ່ລະຄົນ -ດັ່ງນັ້ນ ພວກເຮົາກໍສົມຄວນມີຄວາມຫ່ວງໃຍຕໍ່ຄົນອື່ນເຫມືອນກັນ.
* ມີຄວາມເຂົ້າໃຈໃນສິ່ງທີ່ເຮົາໄດ້ມີປະສົບການກັບຊີວິດທີ່ອຸດົມສົມບູນໄດ້ນັ້ນກໍ ຍ້ອນມີຄວາມສຳພັນກັບພຣະເຢຊູເທົ່ານັ້ນ.
* ຈົ່ງຈຳໄວ້ສເມີວ່າມີພຽງພຣະເຢຊູເທົ່ານັ້ນທີ່ມີຄວາມສາມາດຈັດຕຽມທຸກສິ່ງເພື່ອເຮົາ.
* ຈົ່ງສອນຄົນອື່ນໆ ໃຫ້ມີຄວາມຫມັ້ນໃຈກ່ຽວກັບເຣື່ອງຂອງພຣະເຢຊູ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org - ap ແປແລະຮຽບຮຽງ )